**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

1083

ເລກທີ.............../ກພຫຼ

ນະຄອນຫຼວງວຽງຈັນ, ວັນທີ...06 MAY 2026...

# ປະກາດຮັບສະໝັກພະນັກງານໂຄງການ ຈຳນວນ 03 ຕຳແໜ່ງ

ລັດຖະບານ ສປປ ລາວ ໄດ້ເຊັນສັນຍາກັບທະນາຄານພັດທະນາອາຊີ ເພື່ອດຳເນີນໂຄງການສ້າງຄວາມເຂັ້ມແຂງດ້ານການປັບຕົວ ແລະ ຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ (ສຫຼຊ) ພາຍໃຕ້ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໄລຍະໂຄງການແຕ່ປີ 2025–2030 ເປັນວຽກງານລິເລີ່ມທີ່ສຳຄັນຂອງລັດຖະບານແຫ່ງ ສປປ ລາວ, ທີ່ໄດ້ຮ່ວມມືກັບທະນາຄານພັດທະນາອາຊີ, ເພື່ອແນໃສ່ ການສ້າງຄວາມໝັ້ນຄົງ ດ້ານສະບຽງອາຫານ, ແກ້ໄຂຄວາມທຸກຍາກ ແລະ ຄວາມທ້າທາຍຂອງຜູ້ຂາດສານອາຫານ ໃນຂະນະທີ່ເພີ່ມຄວາມທົນທານຕໍ່ສະພາບອາກາດໃນເຂດຊຸມຊົນ. ໂຄງການດັ່ງກ່າວຈະຂະຫຍາຍກຸ່ມເປົ້າໝາຍຂອງລັດຖະບານໃນການໃຫ້ເງິນອຸດໜູນແບບມີເງື່ອນໄຂ ເພື່ອສົ່ງເສີມວຽກງານໂພຊະນາການ (CCT) ໃນການລົງທະບຽນຢ່າງໜ້ອຍ 25,000 ຄົວເຮືອນທີ່ຢູ່ໃນເຂດທີ່ມີອັດຕາຄວາມທຸກຍາກຫຼາຍ, ການຂາດສານອາຫານ ແລະ ຄວາມສ່ຽງທາງດ້ານດິນຟ້າອາກາດ ແລະ ເຮັດໃຫ້ລະບົບການປົກປ້ອງສັງຄົມມີການປັບຕົວ ແລະ ຕອບສະໜອງຕໍ່ການຕອບໂຕ້ເລື່ອງໄພພິບັດ. ໂຄງການໃຫ້ເງິນອຸດໜູນແບບມີເງື່ອນໄຂ CCT ແມ່ນແນໃສ່ແມ່ຍິງຖືພາທີ່ທຸກຍາກ ແລະ ແມ່ທີ່ມີເດັກນ້ອຍຕໍ່າກວ່າ 2 ປີ, ຈະໄດ້ຮັບໂພຊະນາການທີ່ພຽງພໍແມ່ນມີຄວາມສຳຄັນຫຼາຍໃນໄລຍະ 1,000 ວັນທຳອິດຂອງຊີວິດຂອງເດັກ. ໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດຢູ່ 16 ເມືອງໃນ 4 ແຂວງຄື: ແຂວງ ໄຊຍະບູລີ (ເມືອງ ໄຊຍະບູລີ, ໄຊສະຖານ ແລະ ຊຽງຮ່ອນ), ແຂວງ ຫຼວງພະບາງ (ເມືອງ ພູຄູນ, ຈອມເພັດ, ໂພນທອງ, ວຽງຄຳ ແລະ ໂພນໄຊ), ແຂວງ ຄຳມ່ວນ (ເມືອງ ນາກາຍ, ມະຫາໄຊ, ບົວລະພາ ແລະ ໄຊບົວທອງ) ແລະ ແຂວງ ສະຫວັນນະເຂດ (ເມືອງ ພີນ, ຊົນນະບູລີ, ພະລານໄຊ ແລະ ອາດສະພອນ).

ໂຄງການ ສ້າງຄວາມເຂັ້ມແຂງດ້ານການປັບຕົວ ແລະ ຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ ມີຄວາມຕ້ອງການຮັບສະໝັກພະນັກງານໂຄງການເຮັດວຽກເຕັມເວລາ ຈຳນວນ 03 ຕຳແໜ່ງ ມາປະຈຳຢູ່ຫ້ອງການປະສານງານໂຄງການຂັ້ນເມືອງ ລາຍລະອຽດດັ່ງລຸ່ມນີ້:

1. **ພະນັກງານ ຜູ້ຊ່ວຍປະສານງານ ແລະ ຕິດຕາມປະເມີນຜົນໂຄງການຂັ້ນເມືອງ**, ປະຈຳຢູ່ເມືອງ ພູຄູນ;
2. **ພະນັກງານ ຜູ້ຊ່ວຍການເງິນຂັ້ນເມືອງ**, ປະຈຳຢູ່ເມືອງ ໄຊສະຖານ, ໂພນທອງ ແລະ ວຽງຄຳ;
3. **ພະນັກງານ ພັດທະນາຊຸມຊົນ**, ປະຈຳຢູ່ເມືອງ ໂພນທອງ, ພູຄູນ, ຊຽງຮ່ອນ, ມະຫາໄຊ ແລະ ຊົນນະບູລີ.

ບຸກຄົນທີ່ມີຄວາມສົນໃຈ ແລະ ຕ້ອງການສະໝັກງານກັບໂຄງການພວກເຮົາ ສາມາດປະກອບເອກະສານເຊັ່ນ: ໜັງສືສະໝັກງານ, ປະຫວັດຫຍໍ້, ໃບປະກາດ ແລະ ເອກະສານອື່ນໆ (ຖ້າມີ) ທີ່ສະແດງເຖິງຄຸນນະວຸດທິທີ່ຕ້ອງການ ແລະ ປະສົບການທີ່ກ່ຽວຂ້ອງກັບຕຳແໜ່ງທີ່ຕົນສະໝັກ ແລ້ວສົ່ງເອກະສານສະໝັກງານມາທາງອີເມວທີ່ລະບຸຢູ່ດ້ານລຸ່ມ, ລາຍລະອຽດກອບໜ້າວຽກ ແລະ ເງື່ອນໄຂທີ່ຕ້ອງການແຕ່ລະຕຳແໜ່ງ ສາມາດສະແກນຄິວອາໂຄດດ້ານລຸ່ມ ຫຼື ສົ່ງອີເມວສະເໜີຂໍມາຫາໂຄງການ ໃນໂມງລັດຖະການ 08:00 ໂມງ – 17:00 ໂມງ.
**ມື້ປິດຮັບເອກະສານສະໝັກງານແມ່ນວັນທີ** 22.... **ພຶດສະພາ 2026.** ພວກເຮົາຈະຕິດຕໍ່ຫາຜູ້ທີ່ຜ່ານເຂົ້າຮອບຄັດເລືອກເທົ່ານັ້ນ.

ທີ່ຕັ້ງ ແລະ ເມວຕິດຕໍ່ພົວພັນຂອງ ໂຄງການ ສຫຼຊ

ທ່ານ ປອ ວົງສະຫວັນ ວົງໄກສອນ, ຮອງຫົວໜ້າກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

ອີເມວ: pmu.brrrp@gmail.com

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄຸ້ມຫ້ອງວ່າການສຳນັກງານນາຍົກ, ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.

**ລາຍລະອຽດກອບໜ້າວຽກ ຂອງ 03 ຕຳແໜ່ງ:**

ຫົວໜ້າກົມ

ປອ. ທັດສະກາ ສະພັງທອງ